ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ

ເລກທີ 0930 /ອຄ.ກອຫ

ນະຄອນຫຼວງວຽງຈັນ, ວັນທີ 31 ກໍລະກົດ 2019

# ຄຳສັ່ງ

## ວ່າດ້ວຍການໂຈະ ການອະນຸຍາດດຳເນີນທຸລະກິດໃໝ່ ກ່ຽວກັບໂຮງງານອຸດສາຫະກຳປຸງແຕ່ງ ທີ່ນຳໃຊ້ສິ່ງເສດເຫຼືອຢາງປລາສະຕິກ ເປັນວັດຖຸດິບ

- ອີງຕາມກົດໝາຍວ່າດ້ວຍອຸດສາຫະກຳປຸງແຕ່ງ ສະບັບເລກທີ 048/ສພຊ, ລົງວັນທີ 27 ທັນວາ 2013.
- ອີງຕາມດຳລັດຂອງນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງອຸດສາຫະກຳ ແລະ ການຄ້າ ເລກທີ 230/ນຍ, ລົງວັນທີ 24 ກໍລະກົດ 2017.

ເພື່ອເຮັດໃຫ້ການຄຸ້ມຄອງ, ການປັບປຸງ ແລະ ດັດສົມໂຮງງານອຸດສາຫະກຳປຸງແຕ່ງ ທີ່ນຳໃຊ້ສິ່ງເສດເຫຼືອປລາສະຕິກ ເປັນວັດຖຸດິບ ໃຫ້ໄດ້ມາດຕະຖານເຕັກນິກ, ຫຼຸດຜ່ອນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ ແລະ ສອດຄ່ອງກັບແນວທາງຂອງລັດຖະບານກ່ຽວກັບການພັດທະນາເສດຖະກິດ ແລະ ສັງຄົມ ໃຫ້ໄປຕາມທິດສີຂຽວ ແລະ ຍືນຍົງ.

ລັດຖະມົນຕີ ກະຊວງອຸດສາຫະກຳ ແລະ ການຄ້າ ອອກຄຳສັ່ງ ດັ່ງນີ້:

1. ໃຫ້ໂຈະການອະນຸຍາດດຳເນີນທຸລະກິດໃໝ່ ກ່ຽວກັບໂຮງງານອຸດສາຫະກຳປຸງແຕ່ງ ທີ່ນຳໃຊ້ສິ່ງເສດເຫຼືອຢາງປລາສະຕິກເປັນວັດຖຸດິບ ຈົນກວ່າຈະມີຄຳສັ່ງສະບັບໃຫມ່ ຫຼື ນິຕິກຳອື່ນ ປ່ຽນແທນຄຳສັ່ງສະບັບນີ້.

2. ວິສາຫະກິດ/ໂຮງງານທີ່ໄດ້ຮັບໃບທະບຽນວິສາຫະກິດ, ໃບອະນຸຍາດລົງທຶນ ຫຼື ໃບອະນຸຍາດດຳເນີນທຸລະກິດ ແລະ ໃບອະນຸຍາດປຸກສ້າງໂຮງງານແລ້ວ ແມ່ນໃຫ້ສືບຕໍ່ດຳເນີນການປຸກສ້າງ ແລະ ຂໍໃບຢັ້ງຢືນດຳເນີນກິດຈະການໂຮງງານ ຕາມທີ່ກຳນົດໃນກົດໝາຍວ່າດ້ວຍອຸດສາຫະກຳປຸງແຕ່ງ. ພາຍຫຼັງໄດ້ຮັບໃບຢັ້ງຢືນດຳເນີນກິດຈະການໂຮງງານແລ້ວ ຈຶ່ງສາມາດດຳເນີນການຜະລິດໄດ້.

3. ວິສາຫະກິດ/ໂຮງງານ ທີ່ໄດ້ຮັບໃບທະບຽນວິສາຫະກິດ, ໃບອະນຸຍາດລົງທຶນ ຫຼື ໃບອະນຸຍາດດຳເນີນທຸລະກິດ ແຕ່ຍັງບໍ່ໄດ້ຮັບໃບອະນຸຍາດປຸກສ້າງໂຮງງານ ແມ່ນໃຫ້ຢຸດຕິທັນທີ ຈົນກວ່າຈະມີຄຳສັ່ງສະບັບໃຫມ່ ຫຼື ນິຕິກຳອື່ນປ່ຽນແທນຄຳສັ່ງສະບັບນີ້.

4. ໂຮງງານອຸດສາຫະກຳປຸງແຕ່ງ ທີ່ນຳໃຊ້ສິ່ງເສດເຫຼືອປລາສະຕິກເປັນວັດຖຸດິບ ທີ່ໄດ້ຮັບໃບຢັ້ງຢືນດຳເນີນກິດຈະການໂຮງງານ ແລະ ດຳເນີນການຜະລິດແລ້ວ ແມ່ນເຫັນດີໃຫ້ສືບຕໍ່ດຳເນີນ ແຕ່ມອບໃຫ້ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ ສົມທົບພາກສ່ວນກ່ຽວຂ້ອງ ລົງເກັບກຳຂໍ້ມູນ ແລະ ຕິດຕາມກວດກາ. ຖ້າໂຮງງານໃດຫາກບໍ່ໄດ້ມາດຕະຖານເຕັກນິກໂຮງງານ ຕາມທີ່ກຳນົດໃນກົດໝາຍ ແລະ ລະບຽບການກ່ຽວຂ້ອງ ເປັນຕົ້ນ ທີ່ຕັ້ງໂຮງງານ, ເຕັກນິກ ແລະ ເຕັກໂນໂລຊີການຜະລິດ, ສາງເກັບມ້ຽນວັດຖຸດິບ, ອາຄານໂຮງງານ, ຄວາມປອດໄພ, ສຸຂານາໄມ ແລະ ສິ່ງແວດລ້ອມໂຮງງານ ແມ່ນໃຫ້ໂຈະການຜະລິດ ແລະ ຖອນໃບຢັ້ງຢືນດຳເນີນກິດຈະການໂຮງງານ.

ພາຍຫຼັງປັບປຸງໄດ້ຕາມມາດຖານເຕັກນິກໂຮງງານແລ້ວ ຈຶ່ງສາມາດສະເໜີອອກໃບຢັ້ງຢືນດຳເນີນກິດຈະການໂຮງງານຄືນໃໝ່, ຫຼັງຈາກໄດ້ຮັບໃບຢັ້ງຢືນດຳເນີນກິດຈະການໂຮງງານແລ້ວ ຈຶ່ງສາມາດດຳເນີນການຜະລິດໄດ້.

5. ໂຮງງານທີ່ດຳເນີນການຜະລິດ ໂດຍບໍ່ໄດ້ຮັບອະນຸຍາດຖືກຕ້ອງຕາມກົດໝາຍ ແລະ ລະບຽບການກ່ຽວຂ້ອງ ເປັນຕົ້ນ ບໍ່ມີໃບອະນຸຍາດໃດໜຶ່ງ ຄື: ໃບທະບຽນວິສາຫະກິດ, ໃບອະນຸຍາດລົງທຶນ ຫຼື ໃບອະນຸຍາດດຳເນີນທຸລະກິດ, ໃບອະນຸຍາດປຸກສ້າງໂຮງງານ, ໃບໃບຢັ້ງຢືນດຳເນີນກິດຈະການໂຮງງານ ແມ່ນໃຫ້ຢຸດເຊົາໂດຍທັນທີ ແລະ ດຳເນີນມາດຕະການ ຕາມທີ່ກຳນົດ ໃນກົດໝາຍວ່າດ້ວຍວິສາຫະກິດ ແລະ ລະບຽບການທີ່ກ່ຽວຂ້ອງ ຢ່າງເຂັ້ມງວດ.

6. ໃຫ້ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງວຽງຈັນ, ຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ, ນະຄອນ ເຜີຍແຜ່ ຕໍ່ຂະແໜງການອື່ນ ແລະ ນັກທຸລະກິດ ພາຍໃນ ແຂວງ, ນະຄອນຫຼວງວຽງຈັນ, ເມືອງ, ນະຄອນ ຂອງຕົນ ໃຫ້ຮັບຊາບຢ່າງທົ່ວເຖິງ ແລະ ໃຫ້ຄວາມຮ່ວມມື ໃນການຈັດຕັ້ງປະຕິບັດ ຄຳສັ່ງສະບັບນີ້ ໃຫ້ມີປະສິດຕິຜົນສູງ.

7. ໃຫ້ກົມອຸດສາຫະກຳ ແລະ ຫັດຖະກຳ, ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງວຽງຈັນ, ຫ້ອງການອຸດສາຫະກຳ ແລະ ການຄ້າເມືອງ, ນະຄອນ ປະຕິບັດຄຳສັ່ງສະບັບນີ້ ຢ່າງເຂັ້ມງວດ.

8. ຄຳສັ່ງສະບັບນີ້ ມີຜົນສັກສິດພາຍຫຼັງລົງລາຍເຊັນ ແລະ ລົງໃນຈົດໝາຍເຫດທາງລັດຖະການ ສິບຫ້າວັນ. ⸎

ລັດຖະມົນຕີ

ທ ເຂັມມະນີ ພົນເສນາ